ໂຣມ 6:23 ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະທານອັນ
ໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຍຊູເຈົ້າຂອງ
ພວກເຮົາ

ໂຣມ 8:2 ເພາະວ່າກົດຂອງພຣະວິນຍານອັນເຮັດໃຫ້ມີຊີວິດໃນພຣະເຍຊູຄຣິດນັ້ນ ໄດ້ເຮັດໃຫ້
ເຮົາພົ້ນຈາກກົດຂອງຄວາມຜິດບາບແລະຄວາມຕາຍ

2 ຕິໂມທຽວ 1:10 ແລະບັດນີ້ໄດ້ຊົງສະແດງໃຫ້ແຈ່ມແຈ້ງ ໂດຍການທີ່ພຣະເຍຊູຄຣິດ ພຣະຜູ້
ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ ສະເດັດສ່ອງສວ່າງມາປາກົດ ຜູ້ໄດ້ຊົງກຳຈັດຄວາມ
ຕາຍໃຫ້ສູນສິ້ນໄປ ແລະໄດ້ຊົງນຳຊີວິດແລະສະພາບອະມະຕະໃຫ້ປາກົດແຈ້ງໂດຍຂ່າວປະ
ເສີດ

ໂຢບ 5:2 ຄົນໃຈຮ້ອນຕາຍຍ້ອນຄວາມໂກດ ຄົນໂງ່ຕາຍຍ້ອນຄວາມຮ້າຍ

ໂຮເຊອາ 13:14 ເຮົາຈະບໍ່ຊ່ວຍປະຊາຊົນນີ້ໃຫ້ພົ້ນຈາກພິພົບຄົນຕາຍ ຫລືຊ່ວຍພວກເຂົາໃຫ້
ພົ້ນຈາກອຳນາດຂອງຄວາມຕາຍ ໂອ ຄວາມຕາຍເອີຍ, ຈົ່ງມາພ້ອມກັບໄພວິບັດຂອງເຈົ້າ
ໂອ ພິພົບຄົນຕາຍເອີຍ, ຈົ່ງມາພ້ອມກັບການທຳລາຍຂອງເຈົ້າ ຄວາມເມດຕາເອັນດູໄດ້
ຖືກປິດບັງໄວ້ພົ້ນສາຍຕາຂອງເຮົາແລ້ວ

ເພງສັນລະເສີນ 9:13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາແກ່ຂ້າພຣະອົງ ຂໍຊົງທອດພຣະ
ເນດເບິ່ງວ່າ ຂ້າພຣະອົງຕ້ອງທົນທຸກທໍຣະມານເພາະຄົນທີ່ກຽດຊັງຂ້າພຣະອົງພຽງໃດ ຂ້າ
ແດ່ພຣະອົງ ຜູ້ຊົງຍົກຂ້າພຣະອົງຂຶ້ນຈາກປະຕູຂອງຄວາມຕາຍ

ໂຢບ 6:26 ທ່ານທັງຫລາຍຄົງຈະໄດ້ຈັບສລາກເອົາລູກກຳພ້າພ່ໍ ແລະຕໍ່ຣອງເອົາເພື່ອນຂອງ
ທ່ານເຫມືອນເປັນສິນຄ້າ

ໂຢບ 33:22 ວິນຍານຂອງເຂົາເຂົ້າໄປໃກ້ປາກແດນຄົນຕາຍ ແລະຊີວິດຂອງເຂົາເຂົ້າໃກ້ຜູ້ທີ່
ນຳຄວາມຕາຍມາ

ເອເຊກຽນ 37:12,13 ເພາະສະນັ້ນ ຈົ່ງປະກາດພຣະທັມຕໍ່ອິສຣາເອນໄພ່ພົນຂອງເຮົາວ່າ ພຣະ
ຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ່ນ, ໂອ ໄພ່ພົນຂອງເຮົາເອີຍ, ເຮົາຈະໄຂຂຸມຝັງສົບຂອງ
ເຈົ້າ ແລະຈະນຳເຈົ້າກັບມາຍັງແຜ່ນດິນອິສຣາເອນ 13 “ໂອ ໄພ່ພົນຂອງເຮົາເອີຍ ເຈົ້າຈະ

ຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ແລະຍົກເຈົ້າອອກມາຈາກຫລຸມຝັງສົບຂອງເຈົ້າ

ມັດທາຍ 27:52 ອຸບໂມງຝັງສົບກໍໄຂອອກ ສົບພວກໄພ່ພົນຂອງພຣະເຈົ້າຫລາຍຄົນທີ່ລ່ວງ ຫລັບໄປແລ້ວກໍເປັນຄືນມາ

ປະຖົມການ 2:7 ເມື່ອນັ້ນ ພຣະຜູ້ເປັນເຈົ້າໄດ້ເອົາດິນມາປັ້ນເປັນຮູບຄົນແລ້ວເປົ່າລົມຫາຍໃຈ ໃສ່ຮູດັງໃຫ້ມີຊີວິດ ຮູບປັ້ນນັ້ນກໍກັບກາຍເປັນຄົນທີ່ມີຊີວິດຈິດໃຈ

ປະຖົມການ 6:17 ເຮົາຈະໃຫ້ນ້ຳມາຖ້ວມໂລກ ແລະທຳລາຍທຸກສິ່ງທີ່ມີຊີວິດຢູ່ທຸກໆສິ່ງໃນໂລກ ນີ້ຈະຕາຍໄປ

ປະຖົມການ 7:15 ບັນດາສັດທີ່ມີລົມຫາຍໃຈກໍພາກັນເຂົ້າຢູ່ໃນເຮືອກັບໂນອາແນວລະຄູ່ໆ

ປະຖົມການ 7:22 ບັນດາສັດທີ່ມີລົມຫາຍໃຈເຂົ້າອອກທາງດັງ ຄືສັດທີ່ອາໄສຢູ່ເທິງແຜ່ນດິນກໍ ຕາຍຫມົດ

ໂຢບ 12:10 ຊີວິດຂອງສິ່ງທີ່ມີຊີວິດທຸກຢ່າງຢູ່ໃນພຣະຫັດຂອງພຣະອົງ ທັງລົມຫາຍໃຈ ຂອງມະນຸດທັງປວງ

ໂຢບ 33:4 ພຣະວິນຍານຂອງພຣະເຈົ້າໄດ້ຊົງສ້າງຂ້າພະເຈົ້າ ແລະລົມປານຂອງອົງຜູ້ມີອຳ ນາດຍິ່ງໃຫຍ່ໄດ້ໃຫ້ຊີວິດແກ່ຂ້າພະເຈົ້າ

ກິຈການ 17:25 ພຣະອົງບໍ່ຈຳເປັນໃຫ້ມະນຸດປະຕິບັດພຣະອົງ ເຫມືອນວ່າຊົງມີພຣະປະສົງສິ່ງ ນຶ່ງສິ່ງໃດ ເພາະພຣະອົງນີ້ແຫລະ, ຊົງເປັນຜູ້ປະທານຊີວິດ, ລົມຫັນໃຈ, ແລະສິ່ງສາຣະພັດ ແກ່ຄົນທັງປວງ

ພຣະນິມິດ 13:15 ຊົງຍອມໃຫ້ມັນມີອຳນາດທີ່ຈະໃຫ້ລົມຫັນໃຈແກ່ຮູບສັດນັ້ນ ເພື່ອຮູບສັດ ນັ້ນຈະປາກໄດ້ ແລະໃຫ້ມີອຳນາດເຮັດໃຫ້ບັນດາຄົນທີ່ບໍ່ຍອມບູຊາຮູບສັດຮ້ານນັ້ນເຖິງແກ່ ຄວາມຕາຍ

ໂຢຮັນ 10:10 ຂະໂມຍມາກໍພຽງແຕ່ຈະລັກ ຈະຂ້າ ແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາ ເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ

ເອຊາຢາ 28:15 ເພາະເຈົ້າທັງຫລາຍໄດ້ກ່າວແລ້ວວ່າ “ເຮົາໄດ້ທຳສັນຍາໄວ້ກັບຄວາມຕາຍ ແລະໄດ້ຕົກລົງໄວ້ກັບພີພົບຄົນຕາຍແລ້ວ ໂດຍແນ່ໃຈວ່າ ເມື່ອໄພວິບັດມາເຖິງມັນຈະບໍ່ ທຳລາຍພວກເຈົ້າ ເພາະພວກເຈົ້າອາໄສພວກຂີ້ຕົວະຄວາມຫລອກລວງເປັນເຄື່ອງຊ່ອຍ

ເອຊາຢາ 28:18 ແລ້ວຄຳສັນຍາຂອງເຈົ້າກັບຄວາມຕາຍເປັນໂມຄະ ແລະຂໍ້ຕົກລົງຂອງເຈົ້າ ກັບພີພົບຄົນຕາຍຈະບໍ່ດຳຣົງ ເມື່ອໄພວິບັດອັນຖ້ວມທົ້ນຜ່ານໄປ ເຈົ້າຈະຖືກຍຽບຢ່ຳລົງ

ດ້ວຍໂທດນັ້ນ

ເອຊາຢາ 5:24 ດັ່ງນັ້ນ ແປວໄຟກືນຕໍເຂົ້າສັນໃດ ແລະຫຍ້າແຫ້ງຍຸບລົງສັນໃດ ຮາກຂອງເຂົາ ກໍຈະເປັນເຫມືອນຄວາມເນົ່າເປື່ອຍ ແລະດອກບານຂອງເຂົາຈະປົວໄປເຫມືອນຝຸ່ນຂີ້ດິນ ສັນນັ້ນ ເພາະເຂົາທັງຫລາຍປະຕິເສດບໍ່ຮັບພຣະທັມຂອງພຣະເຈົ້າຈອມໂຍທາ ແລະໄດ້ດູ ຫມິ່ນພຣະຄໍາຂອງອົງບໍຣິສຸດແຫ່ງອິສຣາເອນ

ໂຢເອນ 1:12 ກົກອະງຸ່ນກໍຫ່ຽວຕາຍ ກົກເດື່ອກໍຮ່ວງໂຮຍ ກົກຫມາກພົລາ ກົກຫມາກພລັມ ກົກຫມາກໂປມ ແລະກົກໄມ້ທັງປວງໄດ້ຫ່ຽວແຫ້ງຕາຍໄປ ຄວາມມ່ວນຊື່ນຂອງຄົນທັງ ຫລາຍກໍສູນຫາຍໄປດ້ວຍ

ໂຮເຊອາ 13:15 ເຖິງແມ່ນເຂົາຈະອຸດົມສົມບູນຂຶ້ນເຫມືອນຫຍ້າ ເຮົາກໍຈະສົ່ງລົມຮ້ອນຈາກ ແສງຕາເວັນອອກພັດມາຈາກຖິ່ນກັນດານ ລົມນີ້ຈະເຮັດໃຫ້ນ້ຳສ້າງແລະນ້ຳພຸຂອງພວກ ເຂົາແຫ້ງຫມົດ ມັນຈະພັດເອົາຂອງມີຄ່າທຸກສິ່ງໄປ

ພຣະນິມິດ 22:1 ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນ້ຳທີ່ມີຊີວິດໃສເຫມືອນ ແກ້ວໄຫລອອກມາຈາກພຣະຣາຊບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ

ໂຢຮັນ 4:10 ພຣະເຍຊູຊົງຕອບນາງວ່າ, “ຖ້າເຈົ້າໄດ້ຮູ້ຈັກຂອງທີ່ພຣະເຈົ້າຊົງປະທານ ແລະຮູ້ ຈັກຜູ້ທີ່ກໍາລັງເວົ້າກັບເຈົ້າວ່າ “ຂໍໃຫ້ເຮົາດື່ມນ້ຳແດ່” ເຈົ້າກໍຄົງຈະຂໍຈາກທ່ານ ແລະຜູ້ນັ້ນກໍ ຄົວຈະໃຫ້ນ້ຳອັນປະກອບດ້ວຍຊີວິດໃຫ້ແກ່ເຈົ້າ

ໂຢຮັນ 4:14 ແຕ່ຜູ້ທີ່ດື່ມນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນຈະກາຍເປັນນ້ຳພຸໃນຕົວຜູ້ນັ້ນ ແລະຈະ ພຸ່ງຂຶ້ນເຖິງຊີວິດອັນຕລອດໄປເປັນນິດ”

ສຸພາສິດ 13:14 ຄໍາສອນຂອງນັກປາດເປັນບໍ່ເກີດແຫ່ງຊີວິດ ມັນຈະຊ່ວຍໃຫ້ເຈົ້າຫລີກຫນີໄປ ໄດ້ເມື່ອຕົກຢູ່ໃນອັນຕະຣາຍ

ສຸພາສິດ 14:27 ຄວາມຢາເກງພຣະຜູ້ເປັນເຈົ້າເປັນນ້ຳພຸແຫ່ງຊີວິດ ເພື່ອຜູ້ນຶ່ງຜູ້ໃດຈະຫລີກ ຈາກບ້ວງຂອງຄວາມມໍຣະນາໄດ້

ເອເຊກຽນ 13:17-23 “ເຈົ້າ ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງມຸ່ງຫນ້າຕໍ່ສູ້ບັນດາບຸດສາວແຫ່ງ ຊົນຊາດຂອງເຈົ້າ ຜູ້ປະກາດພຣະທັມຕາມຄວາມຄິດຂອງຕົນເອງ ຈົ່ງປະກາດພຣະທັມ ກ່າວໂທດເຂົາ 18 ແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແຫ່ງຍິງທີ່ຫຍິບຜ້າຍັນ ສໍາລັບຂໍ້ມື ແລະເຮັດຜ້າຄຸມຫົວໃຫ້ຄົນທຸກຂະຫນາດ ເພື່ອລ່າວິນຍານອື່ນໆໃຫ້ຄົງຊີວິດຢູ່ ເພື່ອຜົນກໍາໄຮຂອງເຈົ້າຫລື 19 ເຈົ້າໄດ້ລົບກຽດຂອງເຮົາຖ້ວມກາງໄພ່ພົນຂອງເຮົາ ດ້ວຍ

ເຫັນແກ່ເຂົ້າບລະເປັນກ່ຳໆ ແລະປ່ຽງ ເຂົ້າຈີ່ເທົ່ານັ້ນ ຄົນທີ່ບໍ່ຄວນຈະຕາຍ ເຈົ້າກໍກະທຳໃຫ້ຕາຍເສັ່ງ ຄົນທີ່ບໍ່ຄວນໄວ້ຊີວິດ ເຈົ້າກໍໄວ້ຊີວິດ ໂດຍເຈົ້າເວົ້າຕົວະຕໍ່ໄພ່ພົນທີ່ຟັງຄຳຕົວະ 20 “ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ່ນ, ເຮົາຕໍ່ສູ້ຜ້າຍັນຂອງເຈົ້າ ຊຶ່ງເຈົ້າໃຊ້ວ່າວິນຍານເຫມືອນດັ່ງວ່ານົກ ແລະເຮົາຈະຈີກຜ້າຍັນນັ້ນເສັ່ງຈາກແຂນຂອງເຈົ້າທັງຫລາຍ ແລະເຮົາຈະປ່ອຍວິນຍານເຫລົ່ານັ້ນໄປ ຄືວິນຍານທີ່ເຈົ້າວ່າເຫມືອນດັ່ງວ່ານົກ 21 ຜ້າຄຸມຂອງເຈົ້າ ເຮົາກໍຈະຈີກເສັ່ງດ້ວຍ ແລະຊ່ວຍກູ້ໄພ່ພົນຂອງເຮົາໃຫ້ພົ້ນຈາກມືຂອງເຈົ້າ ແລະເຂົາຈະບໍ່ເປັນເຫຍື່ອໃນມືຂອງເຈົ້າຕໍ່ໄປ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ 22 ເພາະເຈົ້າໄດ້ກະທຳໃຫ້ຄົນຊອບທັມທໍ້ຖອຍໃຈດ້ວຍການຕົວະ ທັງທີ່ເຮົາບໍ່ໄດ້ກະທຳໃຫ້ເຂົາເສົ້າໃຈເລີຍ ແລະເຈົ້າໄດ້ຫນຸນໃຈຄົນອະທັມ ເພື່ອບໍ່ໃຫ້ເຂົາຫັນກັບຈາກທາງອະທັມຂອງເຂົາຈະໄດ້ຮັກສາຊີວິດຂອງເຂົາໄວ້ 23 ເຫດສັນນັ້ນເຈົ້າຈະໄດ້ເຫັນນິມິດທີ່ຫລອກລວງ ຫລືກະທຳການທຳນວາຍອີກ ເຮົາຈະຊ່ວຍກູ້ໄພ່ພົນຂອງເຮົາໃຫ້ພົ້ນຈາກມືຂອງເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ”

ເຢເຣມີ 21:8 “ແລະເຈົ້າຈົ່ງເວົ້າກັບຊົນຊາດນີ້ວ່າ “ພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ່ນ, ເຮົາໄດ້ຕັ້ງວິຖີແຫ່ງຊີວິດແລະທາງແຫ່ງຄວາມຕາຍໄວ້ຕໍ່ຫນ້າເຈົ້າ

ໂຢບ 34:22 ບໍ່ມີບ່ອນມືດຄຶ້ມຫລືບ່ອນມືດທຶບ ຊຶ່ງຄົນຊົ່ວຈະລີ້ຊ່ອນຕົວໄດ້

ເພງສັນລະເສີນ 16:10 ເພາະພຣະອົງຈະບໍ່ຊົງນຳຂ້າພຣະອົງເຂົ້າໄປສູ່ພົບພົບຄົນຕາຍ ພຣະອົງຈະບໍ່ປະປ່ອຍໃຫ້ຜູ້ທີ່ພຣະອົງຮັກເຂົ້າໄປໃນບ່ອນເວີກລັບນັ້ນ

ເພງສັນລະເສີນ 23:4 ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເວີກລັບ ຂ້າພຣະອົງກໍຈະບໍ່ຢ້ານ ເພາະວ່າພຣະອົງຊົງຢູ່ກັບຂ້າພຣະອົງ ໄມ້ຄ້ອນແລະໄມ້ເທົ້າທີ່ພຣະອົງຊົງໃຊ້ກໍຊ່ວຍໃຫ້ຂ້າພຣະອົງພົ້ນພັຍ

ເພງສັນລະເສີນ 30:3 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງນຳຈິດວິນຍານຂອງຂ້າພຣະອົງຂຶ້ນມາຈາກແດນຜູ້ຕາຍ ຊົງໃຫ້ຂ້າພຣະອົງມີຊີວິດ ຈຶ່ງບໍ່ຕ້ອງວົງໄປສູ່ປາກແດນ

ເພງສັນລະເສີນ 49:15 ແຕ່ພຣະເຈົ້າຈະຊົງໄຖ່ຈິດວິນຍານຂອງຂ້າພະເຈົ້າຈາກຣິດທານຸພາບຂອງແດນຜູ້ຕາຍ ເພາະພຣະອົງຈະຊົງຮັບຂ້າພະເຈົ້າໄວ້

ເພງສັນລະເສີນ 56:13 ເພາະພຣະອົງຊົງຊ່ວຍກູ້ຈິດວິນຍານຂອງຂ້າພຣະອົງຈາກມັດຈຸຣາຊ ພຣະອົງຊົງຊ່ວຍກູ້ຕີນຂອງຂ້າພຣະອົງຈາກການລົ້ມບໍ່ແມ່ນຫລື ເພື່ອຂ້າພຣະອົງຈະດຳເນີນຢູ່ຕໍ່ເບື້ອງພຣະພັກພຣະເຈົ້າໃນຄວາມສວ່າງແຫ່ງຊີວິດ

ເພງສັນລະເສີນ 68:20 ພຣະເຈົ້າຂອງເຮົາ ເປັນພຣະເຈົ້າແຫ່ງຄວາມລອດ ຊຶ່ງໄດ້ພົ້ນຄວາມຕາຍ ນັ້ນກໍຢູ່ທີ່ພຣະເຈົ້າ

ເພງສັນລະເສີນ 89:48 ມະນຸດຄົນໃດມີຊີວິດຢູ່ໄດ້ໂດຍບໍ່ຕ້ອງເຫັນຄວາມຕາຍ ຜູ້ໃດຈະຊ່ວຍກູ້ວິນຍານຈິດຂອງຕົນຈາກມືຂອງແດນຜູ້ຕາຍໄດ້

ເພງສັນລະເສີນ 102:19,20 ບັນທຶກວ່າ ພຣະອົງທອດພຣະເນດລົງມາຈາກທີ່ສູງອັນບໍຣິສຸດຂອງ ພຣະອົງ ຈາກຟ້າສວັນ ພຣະຜູ້ເປັນເຈົ້າທອດພຣະເນດແຜ່ນດິນໂລກ 20 ເພື່ອຊົງຟັງສຽງ ຮ້ອງຄາງຂອງຊະເລີຍ ເພື່ອຊົງປ່ອຍຄົນທີ່ຕ້ອງເຖິງຕາຍໃຫ້ເປັນອິສຣະ

ເພງສັນລະເສີນ 116:8 ເພາະພຣະອົງຊົງຊ່ວຍກູ້ຂ້າພຣະອົງຈາກມັດຈຸຣາຊ ຊ່ວຍນັຍຕາຂອງຂ້າ ພຣະອົງຈາກນ້ຳຕາ ຊ່ວຍຕີນຂອງຂ້າພຣະອົງຈາກການລົ້ມ

ສຸພາສິດ 10:2 ຄັງຊັບອະທັມບໍ່ເປັນກຳໄຮ ແຕ່ຄວາມຊອບທັມຊ່ວຍກູ້ຈາກຄວາມຕາຍ

ເອຊາຢາ 26:19 ຄົນຕາຍຂອງພຣະອົງຈະມີຊີວິດ ສົບຂອງເຂົາທັງຫລາຍຈະລຸກຂຶ້ນ ໂອ ຜູ້ອາ ໄສຢູ່ໃນຂີ້ດິນ ຈົ່ງຕື່ນເຖີດ ແລະຮ້ອງເພງເພາະຄວາມຊື່ນບານ ເພາະນ້ຳຄ້າງຂອງເຈົ້າເປັນ ນ້ຳຄ້າງຂອງຄວາມສວ່າງ ແລະແຜ່ນດິນໂລກຈະໃຫ້ຊາວແດນຄົນຕາຍເປັນຂຶ້ນ

ໂຍຮັນ 5:28,29 ຢ່າປລາດໃຈໃນຂໍ້ນີ້ ເພາະໃກ້ຈະເຖິງເວລາທີ່ບັນດາຜູ້ທີ່ຢູ່ໃນຂຸມຝັງສົບຈະໄດ້ ຍິນພຣະສຸຣະສຽງຂອງພຣະອົງ 29 ແລະຈະໄດ້ອອກມາ ບັນດາຜູ້ທີ່ໄດ້ເຮັດການດີກໍຄືນສູ່ຊີ ວິດ ແລະບັນດາຜູ້ເຮັດການຊົ່ວກໍຄືນສູ່ການພິພາກສາ

ໂຍຮັນ 10:28 ຝ່າຍເຮົາກໍປະທານຊີວິດອັນຕລອດໄປເປັນນິດໃຫ້ແກ່ແກະນັ້ນ ແລະເຂົາຈະບໍ່ ຈິບຫາຍຈັກເທື່ອ ບໍ່ມີຜູ້ໃດຈະຍາດເຂົາອອກຈາກມືຂອງເຮົາໄດ້

ໂຍຮັນ 11:43,44 ເມື່ອຊົງກ່າວຢ່າງນັ້ນແລ້ວພຣະອົງຊົງເປັ່ງພຣະສຸຣະສຽງວ່າ, “ລາຊະໂຣ ເອີຍ, ຈົ່ງອອກມາເສັ່ງ” 44 ຜູ້ຕາຍນັ້ນກໍໄດ້ອອກມາ ມີຜ້າພັນຕີນແລະມື ແລະມີຜ້າປົກ ຫນ້າໄວ້ ແລ້ວພຣະເຍຊູຈຶ່ງຊົງບອກເຂົາວ່າ, “ຈົ່ງແກ້ປ່ອຍໃຫ້ເຂົາໄປເສັ່ງ”

ໂຍຮັນ 12:17 ວັນຫນ້າມາປະຊາຊົນຫລວງຫລາຍທີ່ໄດ້ມາໃນງານເທສການນັ້ນ ໄດ້ຍິນວ່າ ພຣະເຍຊູສະເດັດເຂົ້າກຸງເຍຣູຊາເລັມ

ໂຍຮັນ 17:2 ເຫມືອນດັ່ງພຣະອົງໄດ້ຊົງປະທານໃຫ້ພຣະບຸດມີສິດອຳນາດເຫນືອມະນຸດທັງ ປວງ ເພື່ອໃຫ້ປະທານຊີວິດອັນຕລອດໄປເປັນນິດແກ່ທຸກຄົນທີ່ພຣະອົງໄດ້ຊົງມອບໃຫ້ແກ່ ພຣະບຸດນັ້ນ

1 ໂກຣິນໂທ 15:19-26 ຖ້າແມ່ນເຮົາທັງຫລາຍໄດ້ໄວ້ວາງใจໃນພຣະຄຣິດຝ່າຍຊີວິດນີ້ເທົ່ານັ້ນ

ພວກເຮົາກໍເປັນຄົນຫນ້າສັງເວດທີ່ສຸດໃນຫມູ່ຄົນທັງປວງ 20 ແຕ່ທີ່ຈິງພຣະຄຣິດໄດ້ຖືກ
ຊົງບັນດານໃຫ້ຄືນພຣະຊົນແລ້ວ ແລະຊົງເປັນຜົນແຮກໃນພວກຄົນທີ່ລ່ວງຫລັບໄປແລ້ວ
ນັ້ນ 21 ເພາະວ່າຄວາມຕາຍໄດ້ມີມາທາງມະນຸດສັນໃດ ການຄືນມາຈາກຕາຍກໍມີມາທາງ
ມະນຸດສັນນັ້ນ 22 ດ້ວຍວ່າຄົນທັງປວງໄດ້ຕາຍເພາະກ່ຽວເນື່ອງກັບອາດາມສັນໃດ ຄົນທັງ
ປວງກໍຈະຖືກຊົງບັນດານໃຫ້ມີຊີວິດເພາະກ່ຽວເນື່ອງກັບພຣະຄຣິດສັນນັ້ນ 23 ແຕ່ຈະ
ເປັນໄປຕາມລຳດັບຂອງແຕ່ລະຄົນ ຄືພຣະຄຣິດຊົງເປັນຜົນແຮກ ຕໍ່ມາກໍແມ່ນຄົນທັງ
ປວງທີ່ເປັນຢູ່ຝ່າຍພຣະຄຣິດໃນເວລາພຣະອົງສະເດັດມາປາກົດ 24 ຕໍ່ຈາກນັ້ນຈະເປັນ
ຄາວສຸດທ້າຍ ຄືເມື່ອພຣະອົງຈະຊົງຍົກເລີກການປົກຄອງ ກັບທັງອານຸພາບແລະອຳນາດ
ທຸກໆຢ່າງເສັຍ ແລ້ວຈະຊົງມອບຣາຊອານາຈັກໄວ້ແກ່ພຣະເຈົ້າຄືພຣະບິດາ 25 ເພາະວ່າຈຳ
ເປັນພຣະອົງຈະຊົງສເວີຍຣາຊຢູ່ກ່ອນ ຈົນກວ່າພຣະເຈົ້າຈະຊົງປາບສັດຕຣູທັງປວງໃຫ້ຢູ່
ໃຕ້ພຣະບາດຂອງພຣະອົງ 26 ສັດຕຣູຕົວສຸດທ້າຍທີ່ຈະຖືກຊົງຍົກເລີກເສັຍນັ້ນແມ່ນ
ຄວາມຕາຍ

2 ໂກຣິນໂທ 1:9,10 ທີ່ຈິງ, ເຮົາຄາດວ່າເຮົາໄດ້ຖືກໂທດປະຫານຊີວິດແລ້ວ ແຕ່ທີ່ເປັນດັ່ງນັ້ນ
ກໍເພື່ອບໍ່ໃຫ້ເຮົາໄວ້ໃຈໃນຕົນເອງ ແຕ່ໃຫ້ໄວ້ໃຈໃນພຣະເຈົ້າຜູ້ຊົງບັນດານໃຫ້ຄົນທັງປວງ
ຄືນມາຈາກຕາຍ 10 ພຣະອົງນັ້ນໄດ້ຊົງໂຜດໃຫ້ເຮົາພົ້ນຈາກມ່ຣະນະພັຍ ແລະຈະຊົງໂຜດ
ເຮົາອີກ ເຮົາໄວ້ໃຈໃນພຣະອົງວ່າຍັງຈະຊົງໂຜດໃຫ້ເຮົາພົ້ນອີກຕໍ່ໄປ

2 ໂກຣິນໂທ 3:6 ຄືຜູ້ຊົງໂຜດປະທານໃຫ້ເຮົາສາມາດທີ່ຈະເປັນຜູ້ຮັບໃຊ້ຝ່າຍພຣະສັນຍາໃຫມ່
ຊຶ່ງບໍ່ໄດ້ປະກອບດ້ວຍຕົວອັກສອນ ແຕ່ປະກອບດ້ວຍພຣະວິນຍານ ດ້ວຍຕົວອັກສອນນັ
ປະຫານໃຫ້ຕາຍ ແຕ່ສ່ວນພຣະວິນຍານນັ້ນຊົງປະທານໃຫ້ມີຊີວິດ

ໂກໂລຊາຍ 1:21,22 ແລະເຈົ້າທັງຫລາຍ ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົວພັນກັບພຣະເຈົ້າ
ແຕ່ເປັນສັດຕຣູທາງດ້ານຈິດໃຈດ້ວຍການຊົ່ວຮ້ຍຕ່າງໆ 22 ບັດນີ້ ພຣະອົງຊົງໂຜດໃຫ້
ກັບຄືນດີກັບພຣະອົງ ໂດຍການສິ້ນພຣະຊົນແຫ່ງພຣະກາຍ ຄືເນື້ອຫນັງຂອງພຣະອົງ
ເພື່ອຈະໄດ້ຊົງຖວາຍພວກເຈົ້າຕໍ່ພຣະພັກພຣະເຈົ້າ ໃຫ້ເປັນຄົນບໍຣິສຸດທີ່ບໍ່ມີຕຳຫນິຕິ
ຕຽນໄດ້

ເຮັບເຣີ 2:9 ແຕ່ພວກເຮົາກໍເຫັນພຣະເຍຊູ ຜູ້ຊຶ່ງພຣະອົງຊົງບັນດານໃຫ້ຕ່ຳກວ່າເທວະດາ
ພຽງລະຍະນຶ່ງນັ້ນ ໄດ້ຊົງຮັບພຣະສະງ່າຣາສີແລະພຣະກຽດເປັນພວງມາລັຍ ເພາະທີ່ພຣະ
ອົງຊົງສິ້ນພຣະຊົນດ້ວຍຄວາມທໍຣະມານ ທັງນີ້, ໂດຍພຣະຄຸນຂອງພຣະເຈົ້າ ພຣະອົງຈຶ່ງໄດ້

ຊົງຊີມຣົດຄວາມຕາຍແທນມະນຸດທຸກຄົນ

ເຮັບເຣີ 2:14,15 ເຫດສັນນັ້ນ, ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງ ຈຶ່ງໄດ້ຊົງຮ່ວມຊາດມະນຸດເຫມືອນກັນ ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳ ລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄືພຍາມານ 15 ແລະຈະໄດ້ຊົງປ່ອຍຄົນທັງປວງທີ່ ເປັນຂ້ອຍຂ້າຍ້ອນຢ້ານຄວາມຕາຍຕລອດຊີວິດນັ້ນ ໃຫ້ລອດພົ້ນ

ເຮັບເຣີ 11:5 ເພາະເອໂນກມີຄວາມເຊື່ອນີ້ພຣະເຈົ້າຈຶ່ງຊົງຮັບທ່ານຂຶ້ນໄປ ເພື່ອບໍ່ໃຫ້ທ່ານ ພົບກັບຄວາມຕາຍ ແລະບໍ່ມີຜູ້ໃດພົບເຫັນທ່ານ ເພາະພຣະເຈົ້າຊົງຮັບເອົາທ່ານໄປແລ້ວ ອັນນຶ່ງ, ກ່ອນທີ່ຊົງຮັບເອົາທ່ານຂຶ້ນໄປນັ້ນ ມີຜູ້ເປັນພຍານວ່າທ່ານເປັນທີ່ພໍພຣະທັຍພຣະ ເຈົ້າ

1 ເປໂຕ 3:18 ດ້ວຍວ່າພຣະຄຣິດກໍເຫມືອນກັນ, ໄດ້ສິ້ນພຣະຊົນເທື່ອດຽວເປັນການສິ້ນສຸດ ເພື່ອແທນຄວາມຜິດບາບ ຄືພຣະອົງຜູ້ຊອບທັມແທນຜູ້ບໍ່ຊອບທັມ ເພື່ອຈະນຳເຮົາທັງ ຫລາຍໄປເຖິງພຣະເຈົ້າ ຝ່າຍກາຍພຣະອົງຊົງຖືກປະຫານເສັຍ ແຕ່ຝ່າຍວິນຍານພຣະອົງ ຖືກຊົງບັນດານໃຫ້ຄືນພຣະຊົນ

2 ເປໂຕ 1:3 ດ້ວຍເຫັນແລ້ວວ່າຣິດເດດຂອງພຣະອົງໄດ້ຊົງປະທານສິ່ງສາຣະພັດແກ່ພວກ ເຮົາ ທີ່ຈະໄດ້ມີຊີວິດແລະຄວາມເຫລື້ອມໃສໃນພຣະເຈົ້າ ໂດຍຮູ້ຈັກພຣະອົງຜູ້ທີ່ຊົງເອີ້ນ ພວກເຈົ້າດ້ວຍສະງ່າຣາສີ ແລະຄວາມລ້ຳເລີດຂອງພຣະອົງເອງ

1 ໂຍຮັນ 3:14 ຝ່າຍເຮົາທັງຫລາຍຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີ ວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ

1 ໂຍຮັນ 5:11 ນີ້ແຫລະ, ເປັນພຍານຫລັກຖານນັ້ນ ຄືວ່າພຣະເຈົ້າໄດ້ຊົງໂຜດປະທານຊີວິດ ອັນຕລອດໄປເປັນນິດໃຫ້ເຮົາທັງຫລາຍ ແລະຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງ

ພຣະນິມິດ 21:6 ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, “ສຳເຣັດແລ້ວ ເຮົານີ້ຄືອັນຟາແລະໂອເມ ຄາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ ຜູ້ໃດຫິວນ້ຳ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸ ແຫ່ງຊີວິດໂດຍບໍ່ຕ້ອງເສັຍຄ່າ